ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເລກທີ 1248 /ກສ

ນະຄອນຫຼວງວຽງຈັນ, ວັນທີ 12 SEP 2025

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປ່າໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍສັດປ່າ (ສະບັບປັບປຸງ) ສະບັບເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄັ້ງວັນທີ 29 ສິງຫາ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກົມປ່າໄມ້ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ມີປະສິດທິພາບ ແລະ ຍືນຍົງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມປ່າໄມ້ ຂຽນເປັນຕົວອັກສອນຫຍໍ້ວ່າ "**ກປມ**" ແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງມະຫາພາກ ກ່ຽວກັບວຽກງານ ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້ ຕາມລະບົບ 3 ປະເພດປ່າ ບັນດາສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ທີ່ກ່ຽວຂ້ອງ, ຄຸ້ມຄອງໂຮງງານ ອຸດສາຫະກຳປຸງແຕ່ງໄມ້, ເຄື່ອງປ່າຂອງດົງ ແລະ ຢາງພາລາ ໃນຂອບເຂດທົ່ວປະເທດ ໃຫ້ມີຄວາມຍືນຍົງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມປ່າໄມ້ ມີໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ, ມະຕິ, ນິຕິກຳອື່ນ ຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ເຜີຍແຜ່, ເຊື່ອມຊຶມ ແລະ ຄົ້ນຄວ້າຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ແຜນຍຸດທະສາດ, ມະຕິຕົກລົງ ຂອງລັດຖະບານ ກ່ຽວກັບວຽກງານກະສິກຳ ແລະ ສິ່ງແວດລ້ອມ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ພ້ອມທັງຮັບຜິດຊອບການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້າ ສ້າງ, ປັບປຸງ ແລະ ຜັນຂະຫຍາຍ ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດປ່າ ແລະ ສົນທິສັນຍາສາກົນທີ່ກ່ຽວຂ້ອງ ໃຫ້ເປັນນິຕິກຳລຸ່ມກົດໝາຍ ແລະ ເປັນຂໍ້ກຳນົດລະບຽບການ ເພື່ອຈັດຕັ້ງປະຕິບັດໃຫ້ຈະແຈ້ງ ເປັນຕົ້ນ ນິຕິກຳ ກ່ຽວກັບ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຕາມລະບົບ 3 ປະເພດປ່າ, ຄຸ້ມຄອງສັດປ່າ ແລະ ຊີວະນາໆພັນ; ການຄຸ້ມຄອງ, ການຂຸດຄົ້ນ ແລະ ເຄື່ອນຍ້າຍໄມ້ທຳມະຊາດ, ໄມ້ປູກ, ໄມ້ຕໍ່, ຖ່ານຂາວ, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ພາຍໃນປະເທດ ແລະ ການສົ່ງອອກ ເຂົ້າສູ່ລະບົບ; ການຄຸ້ມຄອງ ໂຮງງານອຸດສາຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລະ ໂຮງງານປຸງແຕ່ງຢາງພາລາ, ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ແລະ ນິຕິກຳອື່ນ ທີ່ເຫັນວ່າມີຄວາມຈຳເປັນ;
4. ຄົ້ນຄວ້າ ສ້າງ ແລະ ປັບປຸງ ຮ່າງຍຸດທະສາດປ່າໄມ້, ນະໂຍບາຍຈັດສັນທີ່ດິນປ່າໄມ້ ແບບມີສ່ວນຮ່ວມ ແລະ ອາຊີບຄົງທີ່ ໃຫ້ແກ່ຊຸມຊົນ ແລະ ບ້ານທີ່ຕັ້ງຖິ່ນຖານ ຢູ່ໃນຂອບເຂດທີ່ດິນປ່າໄມ້ ທີ່ບໍ່ສາມາດຍົກຍ້າຍອອກຈາກຖິ່ນຖານເດີມ ໃຫ້ໄດ້ຮັບການພັດທະນາ ທັງເປັນການປົກປັກຮັກສາປ່າໄມ້ ໃຫ້ຍືນຍົງ ເພື່ອນຳສະເໜີລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ລັດຖະບານ ພິຈາລະນາຮັບຮອງ;
5. ຄົ້ນຄວ້າ, ປັບປຸງກົນໄກ ແລະ ນະໂຍບາຍການຄຸ້ມຄອງ ແລະ ພັດທະນາ ອຸທິຍານແຫ່ງຊາດ, ປ່າສະຫງວນແຫ່ງຊາດ, ປ່າປ້ອງກັນແຫ່ງຊາດ ທີ່ກວມເອົາຫຼາຍແຂວງ ໃຫ້ຈະແຈ້ງ; ມີກົນໄກການຄຸ້ມຄອງສະເພາະ ໂດຍການມີສ່ວນຮ່ວມຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນທ້ອງຖິ່ນ;
6. ຄົ້ນຄວ້າສ້າງນະໂຍບາຍສົ່ງເສີມການລົງທຶນ ຂອງພາກສ່ວນຕ່າງໆ ໂດຍສະເພາະຜູ້ປະກອບການ ແລະ ຊຸມຊົນ ເພື່ອຟື້ນຟູປ່າ, ພັດທະນາ ແລະ ປູກໄມ້ ໃນເຂດປ່າຜະລິດ ໃຫ້ຈະແຈ້ງ;
7. ສ້າງແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ໂຮງງານອຸດສາຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງ ຢາງພາລາ ແລະ ເຄື່ອງປ່າຂອງດົງ ໃນຂອບເຂດທົ່ວປະເທດ ເພື່ອສະເໜີລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາອະນຸມັດ ພ້ອມທັງເປັນໃຈກາງ ຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
8. ສຸມທຸກກຳລັງແຮງໃນການປົກປັກຮັກສາ ແລະ ພັດທະນາຊັບພະຍາກອນປ່າໄມ້ໃຫ້ຍືນຍົງ ປະກອບສ່ວນໃນການຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ, ມີວັດຖຸດິບປ້ອນໂຮງງານປຸງແຕ່ງ ເພື່ອຊົມໃຊ້ພາຍໃນ ທົດແທນການນຳເຂົ້າ ແລະ ສົ່ງເສີມການຜະລິດສິນຄ້າ ເພື່ອສົ່ງອອກ;
9. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ດຳເນີນວຽກງານ ສຳຫຼວດ, ກຳນົດເຂດແດນ, ປັກຫຼັກໝາຍ, ກຳນົດເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້ ໃຫ້ຊັດເຈນ ແລະ ແທດເໝາະກັບຄວາມເປັນຈິງ ພ້ອມທັງເກັບກຳຂໍ້ມູນທ່າແຮງການທ່ອງທ່ຽວທຳມະຊາດ ແລະ ສົ່ງເສີມການທ່ອງທ່ຽວຢູ່ເຂດປ່າໄມ້ ແລະ ທີ່ດິນປ່າໄມ້; 4

10. ວາງແຜນ, ຈັດສັນ ແລະ ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມລະບົບ 3 ປະເພດປ່າ ໃຫ້ມີຄວາມຍືນຍົງ ລວມທັງເຂດອ່າງຮັບນໍ້າ, ເຂດປ່າໄມ້ຂັ້ນບ້ານ, ເຂດປູກໄມ້, ເຂດຟື້ນຟູປ່າ ແລະ ກໍານົດເຂດອະນຸລັກສະເພາະຊີວະນາໆພັນ, ສັດປ່າ ພ້ອມທັງຄຸ້ມຄອງ ການຊື້-ຂາຍ ຊະນິດພັນສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ແລະ ໃກ້ຈະສູນພັນ, ການຄຸ້ມຄອງຊີວະນາໆພັນ ຕາມສົນທິສັນຍາສາກົນດ້ານຊີວະນາໆພັນ ທີ່ ສປປ ລາວ ເປັນພາຄີ ແລະ ສົນທິສັນຍາສາກົນອື່ນທີ່ກ່ຽວຂ້ອງ;

11. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ດໍາເນີນການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ແບບມີສ່ວນຮ່ວມ ລວມທັງ ການສ້າງສັນຍາຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ຂັ້ນບ້ານ ພ້ອມທັງຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດສັນຍາດັ່ງກ່າວ;

12. ຄົ້ນຄວ້າ ສໍາຫຼວດ ເກັບຂໍ້ມູນຄວາມອາດສາມາດ ໃນການສະໜອງໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ໃນເຂດປ່າຜະລິດ ໃນແຕ່ລະປີ ເພື່ອວາງແຜນຂຸດຄົ້ນ ແລະ ເປັນພື້ນຖານ ໃນການວາງແຜນດັດສົມໂຮງງານອຸດສາຫະກໍາປຸງແຕ່ງໄມ້ ແລະ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ; ສໍາຫຼວດ, ເກັບກໍາຂໍ້ມູນເນື້ອທີ່ປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ຢູ່ເຂດປ່າຜະລິດ ເພື່ອວາງແຜນສົ່ງເສີມ ການປູກໄມ້ ແລະ ເຄື່ອງປ່າຂອງດົງເປັນສິນຄ້າ ດ້ວຍຮູບແບບຕ່າງໆ ລວມທັງລະບົບກະສິກໍາ ແລະ ປ່າໄມ້ ແບບປະສົມປະສານ;

13. ຄົ້ນຄວ້າ ແລະ ນໍາສະເໜີ ສ້າງຕັ້ງ, ຂະຫຍາຍ, ຍົກລະດັບ, ຫັນປ່ຽນ ປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ ແລະ ເຂດອະນຸລັກພັນພືດ, ພັນສັດປ່າ ເພື່ອໃຫ້ຂັ້ນເທິງພິຈາລະນາ;

14. ເປັນເຈົ້າການ ສໍາຫຼວດປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ກໍານົດເຂດປ່າໄມ້, ທີ່ດິນປ່າໄມ້, ອັດຕາຄວາມປົກຫຸ້ມປ່າໄມ້, ເນື້ອທີ່ປ່າໄມ້, ສັດປ່າ ແລະ ຊີວະນາໆພັນ ໃນລະດັບຊາດ ພ້ອມທັງຊຸກຍູ້, ຕິດຕາມການສໍາຫຼວດ ເພື່ອການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ;

15. ຊຸກຍູ້ ແລະ ສົ່ງເສີມວຽກງານ ກວດກາລາດຕະເວນ, ປ້ອງກັນ, ສະກັດກັ້ນໄຟໄໝ້ລາມປ່າ ແລະ ພະຍາດ ບົ້ງ, ແມງ, ການກ້າເບ້ຍໄມ້, ການປູກໄມ້, ການຟື້ນຟູປ່າ, ແຫຼ່ງແກ່ນພັນໄມ້ ແລະ ຮ້ານຂາຍເບ້ຍໄມ້, ການຂຶ້ນທະບຽນ ປ່າປູກ ແລະ ເຄື່ອງປ່າຂອງດົງ, ເຂດຟື້ນຟູປ່າ, ເຂດປູກປ່າທົດແທນ, ສວນສັດ, ຟາມລ້ຽງສັດປ່າ ແລະ ການຍັ້ງຢືນ ປ່າໄມ້ແຫ່ງຊາດ, ພັນພືດ, ພັນສັດປ່າ ແລະ ຍັ້ງຢືນ ຕົ້ນໄມ້ທໍາມະຊາດ, ຕົ້ນໄມ້ປູກ ແລະ ຕົ້ນໄມ້ໃຫ້ໝາກ ຢູ່ໃນເນື້ອທີ່ດິນທີ່ເປັນກໍາມະສິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

16. ຊຸກຍູ້ ແລະ ສົ່ງເສີມ ວຽກງານຄຸ້ມຄອງປ່າໄມ້ຂັ້ນບ້ານ ແບບຍືນນານ ແລະ ມີສ່ວນຮ່ວມ ຕິດພັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ;

17. ເກັບກໍາ, ສັງລວມ, ສ້າງ ແລະ ຄຸ້ມຄອງ ຂໍ້ມູນຂ່າວສານຊັບພະຍາກອນປ່າໄມ້ ທົ່ວປະເທດ ເພື່ອເປັນຖານຂໍ້ມູນໃຫ້ແກ່ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ໃຫ້ມີຄວາມຍືນຍົງ;

18. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານອຸດສາຫະກໍາປຸງແຕ່ງໄມ້, ໂຮງງານປຸງແຕ່ງ ຢາງພາລາ ແລະ ເຄື່ອງປ່າຂອງດົງ ໃຫ້ເປັນລະບົບຕ່ອງໂສ້ ໃນການຄຸ້ມຄອງກໍານົດແຜນສະໜອງວັດຖຸດິບ, ການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ຢ່າງກົມກຽວ ຕາມທິດຫັນເປັນທັນສະໄໝ;

19. ຊຸກຍູ້, ຕິດຕາມ ແລະ ຄຸ້ມຄອງ ການຂຸດຄົ້ນ, ຈັກຕັດໄມ້, ອຸປະກອນຂຸດຄົ້ນໄມ້ອື່ນໆ, ພາຫະນະລາກແກ່ຂົນສົ່ງໄມ້ ແລະ ແຮງງານ ທີ່ດໍາເນີນກິດຈະການຂຸດຄົ້ນໄມ້; ຄຸ້ມຄອງ ແລະ ອະນຸຍາດນໍາໃຊ້ ຄ້ອນກາຕີໄມ້, ໃບອະນຸຍາດຂຸດຄົ້ນໄມ້ ແລະ ເຄື່ອນຍ້າຍ ໄມ້ທ່ອນ, ໄມ້ເລື່ອຍ, ໄມ້ປະດັບ, ໄມ້ຄໍ້າແບບ, ໄມ້ຫຼັກຮົ້ວ, ໄມ້ເປັນພະລັງງານ, ຖ່ານ, ເຄື່ອງປ່າຂອງດົງ ແລະ ສັດປ່າ;

20. ຄົ້ນຄວ້າ ສ້າງ ແລະ ປັບປຸງ ບັນດານິຕິກຳ, ກົນໄກ, ລະບຽບການ, ຂັ້ນຕອນ ແລະ ສິ່ງກີດຂວາງ ທີ່ເປັນອຸປະສັກ ແກ່ການດຶງດູດການລົງທຶນ, ເຄື່ອນໄຫວດຳເນີນທຸລະກິດ, ການຜະລິດ ຂອງບັນດາບໍລິສັດ, ຜູ້ປະກອບການ, ຫົວໜ່ວຍການຜະລິດ, ຟາມ, ຄອບຄົວຕົວແບບ ທີ່ຕິດພັນກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບ;
21. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຢັ້ງຢືນ ບົດວິພາກເສດຖະກິດ-ເຕັກນິກ, ການຂຶ້ນທະບຽນ, ການຕໍ່ທະບຽນ ແລະ ໃບອະນຸຍາດດຳເນີນກິດຈະການ ກ່ຽວກັບປ່າໄມ້ ເຊັ່ນ: ເຄື່ອງປ່າຂອງດົງ, ທ່ອງທ່ຽວທຳມະຊາດ, ສັດປ່າ, ໂຮງງານອຸດສະຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງ ຢາງພາລາ ແລະ ເຄື່ອງປ່າຂອງດົງ ແລະ ອື່ນໆ ລວມທັງການຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ພ້ອມທັງຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ປະເມີນການລົງທຶນດ້ານປ່າໄມ້, ໂຄງການທີ່ຕິດພັນກັບປ່າໄມ້ ແລະ ທີ່ດິນປ່າໄມ້;
22. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຊີ້ນຳ ແລະ ຈັດຕັ້ງປະຕິບັດ ວຽກງານການຈ່າຍຄ່າບໍລິການ ຂອງລະບົບນິເວດປ່າໄມ້ ເປັນຕົ້ນແມ່ນ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ ແລະ ຍູ້ແຮງການຂາຍສິນເຊື່ອກາກບອນປ່າໄມ້ ໃນເຂດປ່າໄມ້ ທີ່ມີເງື່ອນໄຂ ຕາມທິດສີຂຽວ ແລະ ຍືນຍົງ;
23. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ສະສົມທຶນ ແລະ ລະດົມທຶນ ຈາກບັນດາກິດຈະການປ່າໄມ້ ແລະ ກິດຈະການທີ່ກ່ຽວຂ້ອງກັບການນຳໃຊ້ຊັບພະຍາກອນປ່າໄມ້ ລວມທັງການປະກອບສ່ວນຈາກພາຍໃນ ແລະ ຕ່າງປະເທດ ເຂົ້າກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພ້ອມທັງຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນ ການນຳໃຊ້ທຶນດັ່ງກ່າວ ໃຫ້ມີປະສິດທິຜົນ;
24. ຄົ້ນຄວ້າ, ນຳສະເໜີ ແລະ ປັບປຸງ ກົງຈັກການຈັດຕັ້ງ, ກຳນົດຕຳແໜ່ງງານ ໃຫ້ເປັນລະບົບຄົບຊຸດຕາມທິດກະທັດຮັດ, ມີປະສິດທິພາບ; ສ້າງ ແລະ ປັບປຸງ ແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ແຜນການບຳລຸງ-ກໍ່ສ້າງ ສະມາຊິກພັກ, ພະນັກງານ-ລັດຖະກອນ, ພາລະກອນ ໃນແຕ່ລະໄລຍະ; ຕີລາຄາປະເມີນຜົນ ສະມາຊິກພັກ, ພະນັກງານ-ລັດຖະກອນ, ພາລະກອນ ຢ່າງເປັນປົກກະຕິ; ປະຕິບັດນະໂຍບາຍ ແລະ ວຽກງານແຂ່ງຂັນ-ຍ້ອງຍໍ ຕໍ່ພະນັກງານ-ລັດຖະກອນ, ພາລະກອນ ຕາມກົດໝາຍ ແລະ ລະບຽບການທີ່ກຳນົດ, ພ້ອມທັງບັນຈຸສັບຊ້ອນບຸກຄະລາກອນ ຂັ້ນພະແນກ ແລະ ທຽບເທົ່າ ແລະ ພະນັກງານວິຊາການ ພາຍໃນກົມປ່າໄມ້;
25. ຄົ້ນຄວ້າ, ນຳສະເໜີຂໍອະນຸມັດ ພ້ອມທັງສະເໜີພິຈາລະນາ ໂຈະ, ຍົກເລີກ ບັນດາຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມພາລະບົດບາດຂອງຕົນ;
26. ຍາດແຍ່ງເອົາການຮ່ວມມື ແລະ ຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິທະຍາສາດ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ບັນດາແຜນງານ, ແຜນການ, ໂຄງການ ແລະ ສົນທິສັນຍາສາກົນທີ່ກ່ຽວຂ້ອງກັບປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ ສປປ ລາວ ເປັນພາຄີ;
27. ຄຸ້ມຄອງ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ໃນຂະແໜງການຕົນ; ເປັນໃຈກາງປະສານງານ, ສະຫຼຸບ, ລາຍງານ ວຽກງານ ບົດບາດຍິງ-ຊາຍ ແລະ ພັດທະນາຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ;
28. ຄຸ້ມຄອງງົບປະມານ ແລະ ຊັບສິນຂອງລັດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານປ່າໄມ້ ພ້ອມທັງສັງລວມ, ສະຫຼຸບລາຍງານ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດໄວ້;
29. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານປ່າໄມ້ ໃຫ້ໄປຕາມວຽກຈຸດສຸມ ຂອງກະຊວງ, ລັດຖະບານ ໃນແຕ່ລະໄລຍະ;

ບົນພື້ນຖານຄວາມຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ ໂດຍມີການຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ;

30. ປະກອບສ່ວນເຂົ້າໃນການພັດທະນາບັນດາວິທະຍາໄລ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃຫ້ມີຄວາມເຂັ້ມແຂງ; ຫັນກິດຈະກຳໂຄງການ, ງົບປະມານ, ເຕັກນິກວິຊາການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ລົງສູ່ບັນດາສູນ, ກອງຄຸ້ມຄອງ 3 ປະເພດປ່າ ຢູ່ຂັ້ນທ້ອງຖິ່ນ ເພື່ອປະກອບສ່ວນສ້າງບັນດາສູນ ແລະ ກອງດັ່ງກ່າວ ໃຫ້ມີຄວາມເຂັ້ມແຂງ;
31. ພັດທະນາ, ສັງລວມ ແລະ ຄຸ້ມຄອງ ຂໍ້ມູນສະຖິຕິ ກ່ຽວກັບ ຜະລິດຕະພັນປ່າໄມ້ ແລະ ການລົງທຶນ ຂອງຂະແໜງການຕົນ ຢ່າງລວມສູນ ໃຫ້ສາມາດລາຍງານ, ຮັບໃຊ້ການສະຫຼຸບຕີລາຄາ, ການສ້າງແຜນການ ແລະ ມາດຕະການຈັດຕັ້ງປະຕິບັດ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ພ້ອມທັງຄິດໄລ່ລວມຍອດຜະລິດຕະພັນພາຍໃນຂອງຂະແໜງການ;
32. ສັງລວມ, ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງກົມ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;
33. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

**ມາດຕາ 4 ຂອບເຂດສິດ**

ກົມປ່າໄມ້ ມີສິດ ດັ່ງນີ້:

1. ນຳສະເໜີ ຮ່າງຍຸດທະສາດ, ແຜນງານ, ແຜນການ, ໂຄງການຈັດຕັ້ງປະຕິບັດວາລະແຫ່ງຊາດ ຂອງກົມ ແລະ ຂະແໜງການຕົນ; ຄົ້ນຄວ້າກຳນົດ ນະໂຍບາຍ, ມາດຕະການ ໃນການສົ່ງເສີມຜະລິດຕະພັນພາຍໃນ ແລະ ສົ່ງອອກ ກ່ຽວກັບວຽກງານປ່າໄມ້ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາອະນຸມັດ;
2. ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ຄູ່ມືວິຊາການ ແລະ ລະບຽບການ ກ່ຽວກັບວຽກງານປ່າໄມ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ພ້ອມທັງກວດກາ ຕິດຕາມ ຊຸກຍູ້ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຊີ້ນຳ, ຄຸ້ມຄອງ ດ້ານເຕັກນິກ, ວິຊາການ ຕາມການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດ ຕາມສາຍຕັ້ງ ໃນການຕົກລົງບັນຫາຢ່າງລະອຽດ, ຈະແຈ້ງ ຕາມກົດໝາຍ ແລະ ລະບຽບການທີ່ວາງອອກ;
4. ຄົ້ນຄວ້າ, ອອກ, ໂຈະຊົ່ວຄາວ, ຍົກເລີກ ຫຼື ຖອນ ໃບຢັ້ງຢືນ ການຮັບຮອງບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບການປູກຕົ້ນໄມ້, ເຄື່ອງປ່າຂອງດົງ, ກິດຈະການງທ່ອງທ່ຽວທຳມະຊາດ, ການຈ່າຍຄ່າບໍລິການລະບົບນິເວດປ່າໄມ້ ແລະ ສັດປ່າ, ໂຮງງານອຸດສະຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງ ຢາງພາລາ ແລະ ເຄື່ອງປ່າຂອງດົງ ແລະ ກິດຈະການອື່ນທີ່ກ່ຽວຂ້ອງ;
5. ນຳສະເໜີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຮັບຮອງເອົາການລົງທຶນດ້ານປ່າໄມ້, ການອອກ, ໂຈະຊົ່ວຄາວ, ຍົກເລີກ ຫຼື ຖອນ ໃບອະນຸຍາດດຳເນີນກິດຈະການລົງທຶນ ກ່ຽວກັບການປູກໄມ້, ເຄື່ອງປ່າຂອງດົງ, ກິດຈະການ ດ້ານການທ່ອງທ່ຽວທຳມະຊາດ, ການຈ່າຍຄ່າບໍລິການລະບົບນິເວດປ່າໄມ້ ແລະ ສັດປ່າ, ໂຮງງານອຸດສະຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງ ຢາງພາລາ ແລະ ເຄື່ອງປ່າຂອງດົງ ແລະ ກິດຈະການອື່ນທີ່ກ່ຽວຂ້ອງ;
6. ຄົ້ນຄວ້າ, ຢັ້ງຢືນ ການນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານໄມ້ ແລະ ຜະລິດຕະພັນໄມ້, ສັດປ່າ, ຢາງພາລາ ແລະ ເຄື່ອງປ່າຂອງດົງ, ພາຫະນະ, ກົນຈັກ ແລະ ວັດຖຸອຸປະກອນຮັບໃຊ້ວຽກງານປ່າໄມ້;

7. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບໂຄງການລົງທຶນ ໃນເນື້ອທີ່ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
8. ຄົ້ນຄວ້າ ສ້າງ, ປັບປຸງ ກົດໝາຍ, ນິຕິກຳ ແລະ ຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ໂຮງງານອຸດສະຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງ ຢາງພາລາ ແລະ ເຄື່ອງປ່າຂອງດົງ;
9. ເຊັນສັນຍາ ແລະ ບົດບັນທຶກ ການຮ່ວມມືກັບ ພາຍໃນ, ຕ່າງປະເທດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ຕາມການມອບໝາຍ ຂອງຂັ້ນເທິງ;
10. ຈັດຕັ້ງ ແລະ ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ທັດສະນະສຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ຂອງຂັ້ນເທິງ;
11. ສະເໜີກະຊວງກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງຂອງຕົນ, ການກຳນົດຕຳແໜ່ງງານ, ບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກົດໝາຍ ແລະ ລະບຽບການກຳນົດ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິຜາບ;
12. ສະເໜີກະຊວງກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບການສ້າງກົງຈັກທີ່ເປັນຫົວໜ່ວຍວິຊາການຢູ່ທ້ອງຖິ່ນ ເຊັ່ນ: ກອງຄຸ້ມຄອງປ່າສະຫງວນແຫ່ງຊາດ ຫຼື ກອງຄຸ້ມຄອງອຸທິຍານແຫ່ງຊາດ ທີ່ກວມເອົາຫຼາຍແຂວງ ແລະ ອຸທິຍານແຫ່ງຊາດ ຫຼື ປ່າສະຫງວນແຫ່ງຊາດ ທີ່ເປັນມໍຣະດົກພາກພື້ນ ແລະ ມໍຣະດົກໂລກ ບົນພື້ນຖານການຕົກລົງເຫັນດີເປັນເອກະພາບ ກັບອົງການປົກຄອງທ້ອງຖິ່ນ;
13. ຮຽກໂຮມພະນັກງານນຳພາຄຸ້ມຄອງ ແລະ ພະນັກງານວິຊາການ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ ຫຼື ກິດຈະກຳອື່ນໆ ແລະ ລາຍງານສ່ອງແສງວຽກງານ ເປັນແຕ່ລະໄລຍະ ພ້ອມທັງລົງເຮັດວຽກງານທ້ອງຖິ່ນ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ;
14. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ຊັບສິນຂອງລັດ ຕາມພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້;
15. ສະເໜີປະຕິບັດນະໂຍບາຍ ເລື່ອນຊັ້ນ-ຂັ້ນ ເງິນເດືອນ, ຍ້ອງຍໍ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
16. ພົວພັນ, ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງອ້ອມຂ້າງກະຊວງ ແລະ ຂະແໜງສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານປ່າໄມ້ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້;
17. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກົມປ່າໄມ້ ມີໂຄງປະກອບກົງຈັກ ດັ່ງນີ້:

1. ພະແນກສັງລວມ;
2. ພະແນກແຜນການ ແລະ ການຮ່ວມມື;
3. ພະແນກຄຸ້ມຄອງປ່າປ້ອງກັນ; *[handwritten initial]*

4. ພະແນກຄຸ້ມຄອງປ່າສະຫງວນ;
5. ພະແນກຄຸ້ມຄອງປ່າຜະລິດ;
6. ພະແນກຄຸ້ມຄອງສັດປ່າ ແລະ ສົນທິສັນຍາສາກົນ (CITES);
7. ພະແນກຄຸ້ມຄອງທຸລະກິດໄມ້ ແລະ ເຄື່ອງປ່າຂອງດົງ;
8. ພະແນກຄຸ້ມຄອງປ່າໄມ້ບ້ານ;
9. ພະແນກຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້;
10. ກອງສຳຫຼວດປ່າໄມ້ ແລະ ປ້ອງກັນໄຟປ່າ;
11. ສູນຝຶກອົບຮົມປ່າໄມ້ ແລະ ຍົ້ງຢືນປ່າໄມ້ແຫ່ງຊາດ.

ນອກນັ້ນ, ຍັງມີກອງຄຸ້ມຄອງປ່າສະຫງວນແຫ່ງຊາດ ຫຼື ກອງຄຸ້ມຄອງອຸທິຍານແຫ່ງຊາດ ທີ່ກວມເອົາຫຼາຍແຂວງ ແລະ ອຸທິຍານແຫ່ງຊາດ ຫຼື ປ່າສະຫງວນແຫ່ງຊາດ ທີ່ເປັນມໍລະດົກພາກພື້ນ ແລະ ມໍລະດົກໂລກ ດ້ານການຈັດຕັ້ງ ແມ່ນຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ໂດຍແມ່ນກົມປ່າໄມ້ ເປັນເສນາທິການ ແລະ ເປັນຜູ້ຊີ້ນຳໂດຍກົງ ແລະ ມີຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ສະເພາະ; ຫົວໜ້າກອງ ມີຕຳແໜ່ງບໍລິຫານປະເພດ 4.

### ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

ກົມປ່າໄມ້ ມີໂຄງປະກອບດ້ານບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ ຈຳນວນ 01 ທ່ານ ຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານ ຂອງຕົນ.

   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມ ທ່ານໃດໜຶ່ງ ຮັກສາການແທນ.
2. ຮອງຫົວໜ້າກົມ ຈຳນວນໜຶ່ງ ຊ່ວຍຫົວໜ້າກົມ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ;

   ຮອງຫົວໜ້າກົມ ຜູ້ຮັກສານການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ.
3. ຫົວໜ້າພະແນກ ແລະ ທຽບເທົ່າ, ຮອງຫົວໜ້າພະແນກ ແລະ ທຽບເທົ່າ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບ ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ ຂອງບັນດາພະແນກ ແລະ ສູນ

### ມາດຕາ 7 ໜ້າທີ່ ຂອງພະແນກສັງລວມ

ພະແນກສັງລວມ ມີໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ເກັບກຳ, ສັງລວມ ສະຖິຕິບຸກຄະລາກອນ, ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ພັດທະນາ ບຸກຄະລາກອນ ຂອງຂະແໜງການຕົນ ໃນແຕ່ລະໄລຍະ;
2. ຄົ້ນຄວ້າ ແລະ ນຳສະເໜີ ພາລະບົດບາດ, ປັບປຸງກົງຈັກການຈັດຕັ້ງ, ກຳນົດຕຳແໜ່ງງານ ແລະ ຈັດວາງບຸກຄະລາກອນ ເຂົ້າໃນຕຳແໜ່ງງານຕ່າງໆ ຂອງບັນດາພະແນກ ແລະ ທຽບເທົ່າ ແລະ ກອງຄຸ້ມຄອງ 3 ປະເພດປ່າ ທີ່ຂຶ້ນກັບກົມປ່າໄມ້; ທ

3. ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນ ພະນັກງານ-ລັດຖະກອນ ພ້ອມທັງຄົ້ນຄວ້າ ແລະ ນຳສະເໜີ ການປະຕິບັດນະໂຍບາຍ ເລື່ອນຊັ້ນ-ຂັ້ນເງິນເດືອນ, ເລື່ອນຕຳແໜ່ງ, ຍ້ອງຍໍ ຕໍ່ຜູ້ທີ່ມີຜົນງານ ແລະ ປະຕິບັດວິໄນ ຕໍ່ຜູ້ກະທຳຜິດ ຕາມລະບຽບກົດໝາຍ;
4. ເປັນໃຈກາງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງບັນດາພະແນກ ແລະ ທຽບເທົ່າ;
5. ເປັນໃຈກາງ ປະສານ ແລະ ສັງລວມ ການ ສ້າງ, ປັບປຸງ, ຜັນຂະຫຍາຍ ແລະ ເຜີຍແຜ່ ກົດໝາຍ, ຍຸດທະສາດ, ນະໂຍບາຍ ແລະ ບັນດານິຕິກຳ ທີ່ກ່ຽວຂ້ອງກັບວຽກງານປ່າໄມ້;
6. ຄຸ້ມຄອງ ເອກະສານຂາເຂົ້າ-ຂາອອກ, ຈໍລະຈອນ ແລະ ສຳເນົາເອກະສານ, ວຽກພິທີການ, ເລຂານຸການ, ຄວາມເປັນລະບຽບຮຽບຮ້ອຍ ທີ່ຢູ່ພາຍໃນການຄຸ້ມຄອງ ຂອງກົມປ່າໄມ້;
7. ຄຸ້ມຄອງງົບປະມານ ພາຍໃນ ແລະ ຕ່າງປະເທດ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງກົມປ່າໄມ້ ເພື່ອນຳໃຊ້ເຂົ້າໃນວຽກງານຄຸ້ມຄອງປ່າໄມ້ ພ້ອມທັງສັງລວມ, ສະຫຼຸບລາຍງານ ຕາມລະບຽບການ ທີ່ໄດ້ກຳນົດໄວ້;
8. ເປັນໃຈກາງ ປະສານງານ, ສະຫຼຸບ, ລາຍງານ ວຽກງານບົດບາດຍິງ-ຊາຍ ແລະ ພັດທະນາຄວາມກ້າວໜ້າ ຂອງແມ່ຍິງ ແລະ ແມ່-ເດັກ ຂອງກົມປ່າໄມ້;
9. ຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ຊັບສິນຂອງລັດ ເຊັ່ນ: ທີ່ດິນ, ອາຄານ, ສິ່ງປຸກສ້າງ, ພາຫະນະ, ອຸປະກອນຮັບໃຊ້ ລວມທັງການສ້ອມແປງ, ການບຳລຸງຮັກສາ, ການກໍ່ສ້າງ, ການຈັດຊື້ ແລະ ການຊຳລະສະສາງ ພາຫະນະ, ເຄື່ອງໃຊ້ໄຟຟ້າ, ຕຶກອາຄານ ແລະ ວັດຖຸອຸປະກອນຕ່າງໆ; ສ້າງ ແລະ ປັບປຸງລະບົບຖານຂໍ້ມູນ ຄຸ້ມຄອງຊັບສິນຂອງລັດ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງກົມປ່າໄມ້;
10. ຄຸ້ມຄອງ ບັນຊີ-ການເງິນ, ງົບປະມານ ຂອງບັນດາໂຄງການລົງທຶນຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຕົນ;
11. ຄຸ້ມຄອງ ລະບົບຖານຂໍ້ມູນ ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃນການຄຸ້ມຄອງ ຂອງກົມປ່າໄມ້;
12. ກວດກາ ແລະ ຢັ້ງຢືນ ແຜນຂໍອະນຸມັດນຳໃຊ້ງົບປະມານ ໂຄງການຕ່າງໆ ຂອງບັນດາພະແນກ, ກອງ ແລະ ສູນ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງກົມປ່າໄມ້ ໃຫ້ຖືກຕ້ອງຕາມລະບຽບຫຼັກການ ພ້ອມທັງຢັ້ງຢືນໃສ່ບົດສະຫຼຸບລາຍງານດ້ານການເງິນ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ;
13. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງພະແນກແຜນການ ແລະ ການຮ່ວມມື**

ພະແນກແຜນການ ແລະ ການຮ່ວມມື ມີໜ້າທີ່ ດັ່ງນີ້:

1. ເປັນໃຈກາງ ສັງລວມແຜນການ ແລະ ແຜນງົບປະມານ ພ້ອມທັງສະຫຼຸບລາຍງານປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ;
2. ເປັນໃຈກາງ ຄົ້ນຄວ້າ, ສັງລວມຂໍ້ມູນ, ປະກອບຄຳເຫັນ ບັນດາໂຄງການລົງທຶນ ທີ່ຕິດພັນກັບວຽກງານປ່າໄມ້ ແລະ ການນຳໃຊ້ທີ່ດິນປ່າໄມ້ ພ້ອມທັງເປັນໃຈກາງຄຸ້ມຄອງ ບັນດາໂຄງການ ແລະ ກິດຈະການລົງທຶນດັ່ງກ່າວ;
3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຍາດແຍ່ງເອົາການຮ່ວມມື ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ;
4. ຄົ້ນຄວ້າ ປະກອບຄຳເຫັນຕໍ່ການສະເໜີ ຂອງອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມງານ ກ່ຽວກັບການຈັດກອງປະຊຸມ, ເຈລະຈາ, ສຳມະນາ ແລະ ອື່ນໆ ກ່ຽວກັບວຽກງານປ່າໄມ້ ຢູ່ ສປປ ລາວ;
5. ເປັນໃຈກາງປະສານສົມທົບວຽກງານການຮ່ວມມື ສອງຝ່າຍ ຫຼື ຫຼາຍຝ່າຍ, ການຮ່ວມມືກັບປະເທດເພື່ອນມິດຍຸດທະສາດ, ການຮ່ວມມືໃນກອບອາຊຽນ, ອົງການຈັດຕັ້ງສາກົນ, ພາກພື້ນ ແລະ ອົງການຈັດຕັ້ງທາງສັງຄົມອື່ນ ທີ່ກ່ຽວຂ້ອງ;

6. ສັງລວມ ບົດສະເໜີໂຄງການ ແລະ ຕິດຕາມ ການຈັດຕັ້ງປະຕິບັດ ບັນດາໂຄງການລົງທຶນຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງກົມປ່າໄມ້;
7. ພັດທະນາ, ສັງລວມ ແລະ ຄຸ້ມຄອງ ຂໍ້ມູນສະຖິຕິ ກ່ຽວກັບ ຜະລິດຕະພັນປ່າໄມ້ ແລະ ການລົງທຶນ ຂອງ ຂະແໜງການຕົນ ຢ່າງລວມສູນ ໃຫ້ສາມາດລາຍງານ, ຮັບໃຊ້ການສະຫຼຸບຕີລາຄາ, ການສ້າງແຜນການ ແລະ ມາດຕະການຈັດຕັ້ງປະຕິບັດ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ, 5 ປີ ແລະ ຄິດໄລ່ ລວມຍອດຜະລິດຕະພັນພາຍໃນຂອງຂະແໜງການ;
8. ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນ ຊ່ຽວຊານຕ່າງປະເທດທີ່ປະຈຳຢູ່ບັນດາໂຄງການພາຍໃນກົມປ່າໄມ້ ພ້ອມທັງອຳນວຍຄວາມສະດວກໃນການເຂົ້າມາເຮັດວຽກຢູ່ ສປປ ລາວ;
9. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການທີ່ນຳໃຊ້ງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຕົນ;
10. ເປັນໃຈກາງ ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບສັງລວມ ການຈັດຕັ້ງປະຕິບັດໂຄງການຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງສົນທິສັນຍາ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງພະແນກຄຸ້ມຄອງປ່າປ້ອງກັນ**

ພະແນກຄຸ້ມຄອງປ່າປ້ອງກັນ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທົບທວນ, ກຳນົດຂອບເຂດ ແລະ ທີ່ຕັ້ງ ຂອງເຂດປ່າປ້ອງກັນໃນຂອບເຂດທົ່ວປະເທດ ເພື່ອສະເໜີລັດຖະບານ ພິຈາລະນາອະນຸມັດສ້າງຕັ້ງ;
2. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນວຽກງານ ສຳຫຼວດ, ກຳນົດເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້ ໃຫ້ຊັດເຈນ ແລະ ແທດເໝາະກັບຄວາມເປັນຈິງ ເພື່ອວາງແຜນຈັດສັນ, ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ແບບຍືນຍົງ;
3. ຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດແຜນຈັດສັນປ່າປ້ອງກັນ ລວມທັງແຜນຈັດສັນປ່າໄມ້ຂັ້ນບ້ານທີ່ນອນຢູ່ໃນເຂດປ່າປ້ອງກັນ ແລະ ປັກຫຼັກໝາຍ, ຕິດປ້າຍເຂດທີ່ມີຄວາມຫຼໍ່ແຫຼມ, ເຂດທີ່ມີຄວາມສ່ຽງ;
4. ສ້າງ, ປັບປຸງ, ຄູ່ມືວິຊາການ ແລະ ລະບຽບການ ກ່ຽວກັບວຽກງານປ່າປ້ອງກັນ ລວມທັງໂຄສະນາເຜີຍແຜ່ ບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ, ແຜນງານ ແລະ ໂຄງການ ທີ່ຕິດພັນກັບວຽກງານປ່າໄມ້;
5. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສຶກສາ ແລະ ຄົ້ນຄວ້າ ເຂດທີ່ມີທ່າແຮງ ເພື່ອສະເໜີເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ ແລະ ສົ່ງເສີມການທ່ອງທ່ຽວຢູ່ເຂດປ່າໄມ້;
6. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການສ້າງຕັ້ງ, ຂະຫຍາຍ, ຍົກລະດັບ, ຫັນປ່ຽນ ປ່າປ້ອງກັນ;
7. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການທີ່ນຳໃຊ້ງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຕົນ;
8. ຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ການສະເໜີຂໍເຊົ່າ ຫຼື ສຳປະທານ, ບົດວິພາກ ເສດຖະກິດ-ເຕັກນິກ ກ່ຽວກັບການຂໍອະນຸຍາດ ດຳເນີນກິດຈະການທ່ອງທ່ຽວທຳມະຊາດ ແລະ ກິດຈະການອື່ນ ຢູ່ໃນເຂດປ່າປ້ອງກັນ ຕາມກົດໝາຍ ແລະ ລະບຽບການ;
9. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການທີ່ນຳໃຊ້ງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຕົນ;

10. ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ, ປົກປັກຮັກສາ ປ່າປ້ອງກັນ, ວຽກງານ ປູກໄມ້, ການຟື້ນຟູປ່າ ແລະ ປູກປ່າທົດແທນ ໃນປ່າປ້ອງກັນ ພ້ອມທັງ ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານ ຂອງຕົນໃນແຕ່ລະໄລຍະ;

11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງພະແນກຄຸ້ມຄອງປ່າສະຫງວນ**

ພະແນກຄຸ້ມຄອງປ່າສະຫງວນ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບ ຂະແໜງການສາຍຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ທົບທວນຂອບເຂດປ່າສະຫງວນ, ປັກຫຼັກໝາຍ, ກໍານົດເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນໍາໃຊ້ ແລະ ເຂດກັນຊົນ ໃຫ້ຊັດເຈນ ແລະ ແທດເໝາະກັບຄວາມເປັນຈິງ ເພື່ອສ້າງ ແລະ ປັບປຸງແຜນຈັດສັນ, ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ແບບຍືນຍົງ;
2. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ຈັດຕັ້ງຜັນຂະຫຍາຍ ຍຸດທະສາດ, ແຜນດໍາເນີນງານ ແລະ ບົດລາຍງານແຫ່ງຊາດ ກ່ຽວກັບຊີວະນາໆພັນ, ບັນດາລະບຽບການ ແລະ ຄູ່ມືທາງດ້ານເຕັກນິກວິຊາການ ຂອງພາຍໃນ, ພາກພື້ນ ແລະ ສາກົນ ທີ່ຕິດພັນກັບວຽກງານປ່າສະຫງວນ ແລະ ສົນທິສັນຍາສາກົນດ້ານຊີວະນາໆພັນ ໃຫ້ໄດ້ຮັບຜົນດີ;
3. ເປັນເຈົ້າການ ຄົ້ນຄວ້າ, ສ້າງ, ປັບປຸງ ກົນໄກ, ນະໂຍບາຍ ຄຸ້ມຄອງ ແລະ ພັດທະນາ ອຸທິຍານແຫ່ງຊາດ, ປ່າສະຫງວນແຫ່ງຊາດ ແລະ ເຂດອະນຸລັກພັນພືດ-ພັນສັດ ໂດຍມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ;
4. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຈັດສັນປ່າສະຫງວນແບບຍືນຍົງ ຕິດພັນກັບການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ລວມທັງຍຸດທະສາດຊີວະນາໆພັນແຫ່ງຊາດ ໃນແຕ່ລະໄລຍະ;
5. ເປັນໃຈກາງ ເກັບກໍາ, ສັງລວມ, ສ້າງ ແລະ ຄຸ້ມຄອງ ຂໍ້ມູນ-ຂ່າວສານ ກ່ຽວກັບວຽກງານປ່າສະຫງວນ ແລະ ຊີວະນາໆພັນ ເຊັ່ນ: ຖິ່ນທີ່ຢູ່ອາໄສ ຂອງຊະນິດພັນພືດ ແລະ ສັດປ່າ ທີ່ຫາຍາກ, ໃກ້ຈະສູນພັນ, ເພື່ອເປັນຖານຂໍ້ມູນ, ສູນຮຽນຮູ້ ໃຫ້ແກ່ການສຶກສາຄົ້ນຄວ້າ;
6. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກໍານົດ, ຍົກລະດັບ, ຈັດປະເພດ ແລະ ສະເໜີປ່າສະຫງວນ ທີ່ມີເງື່ອນໄຂ ເປັນອຸທິຍານແຫ່ງຊາດ, ຂຶ້ນບັນຊີທີ່ກ່ຽວຂ້ອງ ໃນລະດັບຊາດ, ພາກພື້ນ, ສາກົນ ແລະ ລະດັບໂລກ, ເປັນຕົ້ນ ບັນຊີສີຂຽວ, ມໍຣະດົກໂລກ, ມໍຣະດົກອາຊຽນ ແລະ ອື່ນໆ;
7. ເປັນເຈົ້າການ ສ້າງສື່ສິ່ງພິມ, ແຜ່ນພັບ, ໂປດສະເຕີ ແລະ ຈັດຕັ້ງການໂຄສະນາເຜີຍແຜ່ ປູກຈິດສໍານຶກດ້ານການອະນຸລັກ, ກົດໝາຍ, ລະບຽບການ ກ່ຽວກັບວຽກງານ ປ່າສະຫງວນ ແລະ ຊີວະນາໆພັນ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ;
8. ຄົ້ນຄວ້າ, ປະກອບຄໍາເຫັນ ຕໍ່ການສະເໜີຂໍເຊົ່າ ຫຼື ສໍາປະທານ, ບົດວິພາກ ເສດຖະກິດ-ເຕັກນິກ ກ່ຽວກັບການຂໍອະນຸຍາດ ດໍາເນີນກິດຈະການທ່ອງທ່ຽວທໍາມະຊາດ ໃນເຂດປ່າໄມ້ ແລະ ກິດຈະການອື່ນ ຢູ່ໃນເຂດປ່າສະຫງວນ ແລະ ອຸທິຍານແຫ່ງຊາດ ຕາມກົດໝາຍ ແລະ ລະບຽບການ;
9. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການທີ່ນໍາໃຊ້ງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຕົນ;
10. ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ຟື້ນຟູປ່າ, ນໍາໃຊ້ ລວມທັງບັນດາໂຄງການລົງທຶນ ທີ່ຈັດຕັ້ງປະຕິບັດ ໃນເຂດປ່າສະຫງວນ ພ້ອມທັງສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານ ຂອງຕົນໃນແຕ່ລະໄລຍະ;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 11 ໜ້າທີ່ ຂອງພະແນກຄຸ້ມຄອງປ່າຜະລິດ**

ພະແນກຄຸ້ມຄອງປ່າຜະລິດ ມີໜ້າທີ່ ດັ່ງນີ້:

1. ເປັນໃຈກາງ ປັບປຸງ, ກຳນົດ ນະໂຍບາຍ, ນິຕິກຳໃຕ້ກົດໝາຍ ແລະ ຄູ່ມືດ້ານວິຊາການ ກ່ຽວກັບວຽກງານ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນປ່າຜະລິດ ແບບຍືນຍົງ, ລວມທັງການໂຄສະນາ ເຜີຍແຜ່ ເຊື່ອມຊຶມ ນະໂຍບາຍ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຄູ່ມືດ້ານວິຊາການ ໃຫ້ກວ້າງຂວາງ;
2. ຊຸກຍູ້ ແລະ ຕິດຕາມ ການຜັນຂະຫຍາຍແຜນ ຈັດສັນ ແລະ ຄຸ້ມຄອງ ທີ່ດິນປ່າຜະລິດ ແບບຍືນຍົງ ອອກເປັນແຜນດຳເນີນງານ, ໂຄງການ ໃນແຕ່ລະໄຕມາດ ຢ່າງຊັດເຈນ;
3. ຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດແຜນ ຈັດສັນ ແລະ ຄຸ້ມຄອງ ປ່າຜະລິດ ແບບຍືນຍົງ ແລະ ແຜນຈັດສັນປ່າໄມ້ຂັ້ນບ້ານ ທີ່ນອນຢູ່ໃນປ່າຜະລິດ ລວມທັງການ ປັກຫຼັກໝາຍ, ຕິດປ້າຍ ຢູ່ເຂດທີ່ມີຄວາມຫຼໍ່ແຫຼມ, ເຂດທີ່ມີຄວາມສ່ຽງສູງ ຕໍ່ການຖືກບຸກລຸກທຳລາຍ;
4. ຄົ້ນຄວ້ານະໂຍບາຍສົ່ງເສີມການລົງທຶນ ພາຍໃນ, ພາກພື້ນ ແລະ ສາກົນ ເຂົ້າໃນວຽກງານການ ຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ໃນປ່າຜະລິດ ໃຫ້ມີຄວາມຍືນຍົງ;
5. ເປັນໃຈກາງຊຸກຍູ້ ການທົບທວນຄືນເຂດ ຟື້ນຟູປ່າ ແລະ ປູກໄມ້ ຢູ່ໃນປ່າຜະລິດ ທີ່ມີທ່າແຮງ ໃນການລົງທຶນ ຟື້ນຟູປ່າ, ປູກ ໄມ້, ເຄື່ອງປ່າຂອງດົງ ແລະ ກະສິກຳ-ປ່າໄມ້ ແບບປະສົມປະສານ ເປັນສິນຄ້າປະກອບສ່ວນໃນການຄໍ້າປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ, ມີວັດຖຸດິບປ້ອນໂຮງງານປຸງແຕ່ງ ເພື່ອຊົມໃຊ້ພາຍໃນ, ທົດແທນການນຳເຂົ້າ ແລະ ສົ່ງອອກ;
6. ເປັນໃຈກາງ ດຳເນີນວຽກງານການປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ການຜັນຂະຫຍາຍກອງທຶນພັດທະນາບ້ານ ຢູ່ໃນປ່າຜະລິດ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ;
7. ຊຸກຍູ້, ສົ່ງເສີມ ແລະ ຕິດຕາມ ວຽກງານ ກ້າເບ້ຍໄມ້, ຟື້ນຟູປ່າ, ປູກ ໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ໃນພື້ນທີ່ໄດ້ກຳນົດໄວ້ຕາມ ກົດໝາຍ ແລະ ດຳລັດ ປ່າຜະລິດ;
8. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການ ທີ່ນຳໃຊ້ງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ກ່ຽວຂ້ອງກັບ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
9. ຕິດຕາມກວດກາ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານທັງໝົດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນເປັນປົກກະຕິ ແລະ ຕໍ່ເນື່ອງ;
10. ສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດວຽກງານ ຂອງຕົນ ໃນແຕ່ລະໄລຍະ ໃຫ້ຂັ້ນເທິງ ເປັນປົກ ກະຕິ;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 12 ໜ້າທີ່ ຂອງພະແນກຄຸ້ມຄອງສັດປ່າ ແລະ ສົນທິສັນຍາສາກົນ (CITES)**

ພະແນກຄຸ້ມຄອງສັດປ່າ ແລະ ສົນທິສັນຍາສາກົນ (CITES) ມີໜ້າທີ່ ດັ່ງນີ້:

1. ເປັນໃຈກາງ ສ້າງ, ປັບປຸງ ກົດໝາຍ ແລະ ນິຕິກຳ ກ່ຽວກັບສັດປ່າ ແລະ ສົນທິສັນຍາສາກົນ (CITES), ຄູ່ມືວິຊາການ ແລະ ລະບຽບການ ກ່ຽວກັບວຽກງານສັດປ່າ ແລະ ສົນທິສັນຍາສາກົນ (CITES) ແລະ ມາດຕະການແກ້ໄຂຂໍ້ຂັດແຍ່ງຕ່າງໆ ລະຫວ່າງຄົນ ແລະ ສັດປ່າ (ໂດຍສະເພາະຊ້າງປ່າ) ພ້ອມທັງໂຄສະນາເຜີຍແຜ່ ບັນດາກົດໝາຍ, ລະບຽບການ, ນິຕິກຳລຸ່ມກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ ກ່ຽວກັບວຽກງານສັດປ່າ ແລະ ສົນທິສັນຍາສາກົນ (CITES);
2. ຄົ້ນຄວ້າ ປະກອບຄຳເຫັນ ແລະ ຢັ້ງຢືນ ບົດວິພາກເສດຖະກິດ-ເຕັກນິກ, ການຕໍ່ທະບຽນ ແລະ ໃບອະນຸຍາດດຳເນີນກິດຈະການ ກ່ຽວກັບສັດປ່າ ແລະ ການຂໍອະນຸຍາດສ້າງຕັ້ງ ສວນສັດ, ຟາມລ້ຽງສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍ ພັນສັດປ່າ ແລະ ສວນພຶກປ່າ ຂອງຜູ້ປະກອບການ;

3. ຄົ້ນຄວ້າ, ປະກອບຄຳເຫັນ ການອອກໃບອະນຸຍາດ ຫຼື ໃບຢັ້ງຢືນ ການນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ການສົ່ງຜ່ານ ສັດປ່າ ແລະ ພືດປ່າ ລວມທັງຊິ້ນສ່ວນ ແລະ ຜະລິດຕະພັນຕ່າງໆ;
4. ຊຸກຍູ້, ຕິດຕາມ, ຄຸ້ມຄອງ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດກິດຈະການ ລ້ຽງສັດປ່າ ແລະ ປູກພືດປ່າ, ການຂຶ້ນທະບຽນສັດປ່າ ແລະ ຊິ້ນສ່ວນສັດປ່າ ຢູ່ໃນສວນສັດ, ຟາມລ້ຽງສັດປ່າ ແລະ ສູນຟື້ນຟູ, ສູນຂະ ຫຍາຍພັນສັດປ່າ ຂອງບຸກຄົນ ແລະ ຜູ້ປະກອບການ;
5. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ເຄື່ອນຍ້າຍ ແລະ ຄຸ້ມຄອງ ສັດປ່າ ແລະ ພືດປ່າ ທີ່ນອນຢູ່ໃນ ບັນຊີ I ແລະ ບັນຊີ II ເພື່ອໃຫ້ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການທີ່ ສປປ ລາວ ເປັນພາຄີ;
6. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງ ແລະ ຄຸ້ມຄອງ ສາງເກັບຮັກສາ ສັດປ່າ ແລະ ພືດປ່າ ລວມທັງຊິ້ນສ່ວນ ແລະ ຜະລິດຕະພັນຕ່າງໆ ທີ່ໃກ້ຈະສູນພັນ ທີ່ໄດ້ຈາກການຍຶດ ຫຼື ການຕັດສິນຂອງສານ ເພື່ອຮັບໃຊ້ເຂົ້າໃນວຽກງານ ສຶກສາຄົ້ນຄວ້າ ແລະ ສ້າງແຜນຄຸ້ມຄອງຄວາມສ່ຽງຕໍ່ການສູນພັນຂອງສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ;
7. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສຳຫຼວດ ແລະ ຢັ້ງຢືນ ຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ຢູ່ໃນ ແລະ ນອກເຂດ 3 ປະເພດປ່າ, ທີ່ດິນປ່າໄມ້ ແລະ ເຂດພັດທະນາພື້ນຖານໂຄງລ່າງ ເຊັ່ນ: ເຂື່ອນໄຟຟ້ານ້ຳຕົກ, ແລວສາຍສົ່ງ, ຂຸດຄົ້ນບໍ່ແຮ່ ແລະ ອື່ນໆ ພ້ອມທັງກຳນົດເຂດອະນຸລັກ ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ສັດ ປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ໃຫ້ມີຄວາມຍືນຍົງ;
8. ສ້າງ, ປັບປຸງ, ຄຸ້ມຄອງ ລະບົບຖານຂໍ້ມູນ ສັດປ່າ ແລະ ສົນທິສັນຍາສາກົນ (CITES), ເກັບກຳ ແລະ ວິເຄາະຂໍ້ມູນຂ່າວສານ ກ່ຽວກັບສະພາບດ້ານຊີວະວິທະຍາ ຂອງຊະນິດພັນ ທີ່ໄດ້ຮັບຜົນກະທົບຈາກການຊື້-ຂາຍ ເພື່ອກະກຽມ ບົດສະເໜີປັບປຸງ ແລະ ດັດແກ້ບັນຊີ ຂອງສົນທິສັນຍາສາກົນ (CITES);
9. ປະກອບວັດຖຸ-ເຕັກນິກ ແລະ ຍົກລະດັບ ຄວາມຮູ້ ຄວາມສາມາດ ໃນການພິສູດຢັ້ງຢືນ ຊະນິດພັນພືດ ແລະ ພັນສັດ ຢູ່ພາຍໃນປະເທດ ໃຫ້ມີຄວາມພ້ອມຮອບດ້ານ;
10. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການ ທີ່ນຳໃຊ້ງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຕົນ;
11. ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງສັດປ່າ ແລະ ສົນທິສັນຍາສາກົນ (CITES) ພ້ອມທັງສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ໃນແຕ່ລະໄລຍະ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 13 ໜ້າທີ່ ຂອງພະແນກຄຸ້ມຄອງທຸລະກິດໄມ້ ແລະ ເຄື່ອງປ່າຂອງດົງ**

ພະແນກຄຸ້ມຄອງທຸລະກິດໄມ້ ແລະ ເຄື່ອງປ່າຂອງດົງ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານອຸດສາຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ໂຮງງານປຸງແຕ່ງຢາງພາລາ, ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ລວມທັງ ໂຮງງານທີ່ໃຊ້ໄມ້ເປັນພະລັງງານ ໃຫ້ເປັນລະບົບຕ່ອງໂສ້ ໃນການຄຸ້ມຄອງ, ກຳນົດແຜນການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ຢ່າງກົມກຽວ ໃນຂອບເຂດທົ່ວປະເທດ;
2. ສ້າງ ແລະ ປັບປຸງ ນິຕິກຳ ກ່ຽວກັບໂຮງງານອຸດສາຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ໂຮງງານປຸງແຕ່ງຢາງພາລາ, ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ; ສ້າງ ແລະ ປັບປຸງ ນິຕິກຳ ກ່ຽວກັບການ

ຄຸ້ມຄອງ ການເຄື່ອນຍ້າຍ ໄມ້ທຳມະຊາດ, ໄມ້ປູກ, ໄມ້ຕື້ອ, ຖ່ານຂາວ, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ພາຍໃນປະເທດ ແລະ ການສົ່ງອອກ ໃຫ້ເຂົ້າສູ່ລະບົບ; ສ້າງ ແລະ ປັບປຸງ ນິຕິກຳ ກ່ຽວກັບບັນຊີໄມ້ ແລະ ເຄື່ອງປ່າຂອງດົງ, ລາຍການຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ;

3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ແລະ ການກຳນົດ ແລະ ປັບປຸງລາຄາພັນທະໄມ້, ເຄື່ອງປ່າຂອງດົງ, ຢາງພາລາ ແລະ ຖ່ານຂາວ ເປັນແຕ່ລະໄລຍະ;
4. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຢັ້ງຢືນ ບົດວິພາກເສດຖະກິດ-ເຕັກນິກ, ການຂຶ້ນທະບຽນ, ການຕໍ່ທະບຽນ ແລະ ໃບອະນຸຍາດດຳເນີນກິດຈະການ ກ່ຽວກັບໂຮງງານອຸດສາຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ໂຮງງານປຸງແຕ່ງຢາງພາລາ, ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ລວມທັງໄມ້ຄ້ຳແບບຈາກປ່າທຳມະຊາດ;
5. ຄົ້ນຄວ້າ ແລະ ສັງລວມ ແຜນການຂຸດຄົ້ນ ໄມ້ ແລະ ເຄື່ອງປ່າຂອງດົງ, ຢາງພາລາ ແລະ ໄມ້ເປັນພະລັງງານໃນແຕ່ລະປີ ແລະ ແຜນການຂຸດຄົ້ນ ໄມ້ ແລະ ເຄື່ອງປ່າຂອງດົງ ໃນເຂດໂຄງການກໍ່ສ້າງພື້ນຖານໂຄງລ່າງຕ່າງໆ ແລະ ເຂດຂຸດຄົ້ນແຮ່ທາດ ຈາກທ້ອງຖິ່ນ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາອະນຸມັດ;
6. ຄຸ້ມຄອງ ການຂຸດຄົ້ນ ໄມ້, ເຄື່ອງປ່າຂອງດົງ, ເຄື່ອງຈັກຕັດໄມ້, ພາຫະນະລາກແກ່ຂົນສົ່ງໄມ້, ຄ້ອນກາຕີໄມ້, ໃບອະນຸຍາດ ຂຸດຄົ້ນໄມ້ທຳມະຊາດ ແລະ ເຄື່ອງປ່າຂອງດົງ, ໃບອະນຸຍາດເຄື່ອນຍ້າຍ ໄມ້ທ່ອນ, ໄມ້ເລື່ອຍ, ໄມ້ປະດັບ, ໄມ້ຄ້ຳແບບ, ໄມ້ຫຼັກຮື້ອ, ໄມ້ເປັນພະລັງງານ ແລະ ຖ່ານ ພາຍໃນປະເທດ ແລະ ໃບອະນຸຍາດເຄື່ອນຍ້າຍ ຢາງພາລາ ແລະ ເຄື່ອງປ່າຂອງດົງ ພາຍໃນ ແລະ ສົ່ງອອກຕ່າງປະເທດ;
7. ເປັນເຈົ້າການ ຄຸ້ມຄອງ, ຕິດຕາມ, ສະຫຼຸບ ແລະ ຢັ້ງຢືນ ໄມ້ສິນເຂົ້າ, ໄມ້ສິນອອກ ແລະ ໄມ້ຄ້າງສາງ ພາຍໃນໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ຜະລິດຕະພັນໄມ້;
8. ກວດກາ ແລະ ດັດສົມ ບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ໂຮງງານປຸງແຕ່ງຢາງພາລາ, ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ໃຫ້ການຜະລິດມີຄວາມເຂັ້ມແຂງ ແລະ ປະສິດທິພາບ;
9. ຕິດຕາມ ຂໍ້ມູນຂ່າວສານ ດ້ານການຕອບສະໜອງ ແລະ ຄວາມຕ້ອງການວັດຖຸດິບ ເພື່ອປ້ອນໂຮງງານ ແລະ ຜະລິດຕະພັນໄມ້ ຢູ່ຕະຫຼາດ ພາຍໃນ ແລະ ຕ່າງປະເທດ;
10. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການທີ່ນຳໃຊ້ງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຕົນ;
11. ຊຸກຍູ້, ຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງທຸລະກິດໄມ້ ແລະ ເຄື່ອງປ່າຂອງດົງ ພ້ອມທັງສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ແຕ່ລະໄລຍະ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 14 ໜ້າທີ່ ຂອງພະແນກຄຸ້ມຄອງປ່າໄມ້ບ້ານ**

ພະແນກຄຸ້ມຄອງປ່າໄມ້ບ້ານ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຊຸກຍູ້ ແລະ ສົ່ງເສີມ ການວາງແຜນນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້, ສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ແບບມີສ່ວນຮ່ວມ ລວມທັງການສ້າງສັນຍາຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ຂັ້ນບ້ານ ແລະ ຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດສັນຍາ ພ້ອມທັງ ການຂຶ້ນບັນຊີ ຕົ້ນໄມ້ທຳມະຊາດ ທີ່ມີຢູ່ໃນທີ່ດິນນາ, ທີ່ດິນສວນ ແລະ ທີ່ດິນປຸກສ້າງ ຂອງບຸກຄົນ ນິຕິບຸກຄົນ ຫຼື ການຈັດຕັ້ງ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ນິຕິກຳ ກ່ຽວກັບນະໂຍບາຍຈັດສັນທີ່ດິນປ່າໄມ້ຂັ້ນບ້ານ ແບບມີສ່ວນຮ່ວມ ແລະ ອາຊີບຄົງທີ່ ໃຫ້ແກ່ບ້ານ ແລະ ຊຸມຊົນ, ບ້ານທີ່ຕັ້ງຖິ່ນຖານ ຢູ່ໃນຂອບເຂດທີ່ດິນປ່າໄມ້ ທີ່ບໍ່ 4

ສາມາດຍົກຍ້າຍອອກຈາກຖິ່ນຖານເດີມ ໃຫ້ໄດ້ຮັບການພັດທະນາ ທັງປົກປັກຮັກສາປ່າໄມ້ ໃຫ້ມີຄວາມຍືນຍົງ;

3. ສັງລວມຖານຂໍ້ມູນ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາປ່າໄມ້ຂັ້ນບ້ານ ເຊັ່ນ: ແຜນການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ, ແຜນນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ເຊື່ອມໂຍງກັບພາກສ່ວນກ່ຽວຂ້ອງ;
4. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຊຸກຍູ້ ແລະ ສົ່ງເສີມ ປະຊາຊົນທີ່ອາໄສຢູ່ໃນເຂດປ່າໄມ້ ດໍາເນີນການຜະລິດກະສິກໍາ ແລະ ປ່າໄມ້ ຫຼື ກະສິກໍາ ແລະ ປ່າໄມ້ ແບບປະສົມປະສານ ເປັນສິນຄ້າ ແລະ ສ້າງເສດຖະກິດຮ່ອມມີ ຮູບແບບຕ່າງໆທີ່ເໝາະສົມ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ;
5. ຊຸກຍູ້ ແລະ ສົ່ງເສີມ ວຽກງານຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ແບບຍືນນານ ແລະ ມີສ່ວນຮ່ວມຕິດພັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໂດຍການສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານກວດກາລາດຕະເວນ, ປ້ອງກັນ, ສະກັດກັ້ນໄຟໄໝ້ລາມປ່າ ແລະ ພະຍາດບົ້ງ ແມງ, ໂຄສະນາເຜີຍແຜ່ລະບຽບ ແລະ ກົດໝາຍ ທີ່ກ່ຽວຂ້ອງກັບວຽກງານປ່າໄມ້ຂັ້ນບ້ານ;
6. ຊຸກຍູ້ ແລະ ສົ່ງເສີມ ການກ້າເບ້ຍໄມ້, ການປູກໄມ້, ການຟື້ນຟູປ່າ ແລະ ເຄື່ອງປ່າຂອງດົງ ໂດຍປະຊາຊົນເປັນເຈົ້າການ ແລະ ການມີສ່ວນຮ່ວມຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ໃນເຂດປ່າໄມ້ບ້ານ;
7. ເປັນຈຸດປະສານງານແຫ່ງຊາດ ທາງດ້ານວິຊາການ ກ່ຽວກັບປ່າໄມ້ສັງຄົມອາຊຽນ;
8. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການທີ່ນໍາໃຊ້ງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບ ຂອງຕົນ;
9. ຊຸກຍູ້, ຕິດຕາມ, ປະເມີນຜົນ, ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າໄມ້ບ້ານໃນແຕ່ລະໄລຍະ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 15 ໜ້າທີ່ ຂອງພະແນກຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທໍາລາຍປ່າໄມ້**

ພະແນກຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທໍາລາຍປ່າໄມ້ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການ ສ້າງ, ປັບປຸງ ນິຕິກໍາ, ຍຸດທະສາດ ແລະ ແຜນດໍາເນີນງານ ກ່ຽວກັບວຽກງານຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການທໍາລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ;
2. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ກໍານົດ ມາດຕະຖານ ແລະ ເຕັກນິກ ກ່ຽວກັບການຈ່າຍຄ່າບໍລິການຂອງລະບົບນິເວດປ່າໄມ້ ລວມທັງການຄ້າຂາຍກາກບອນປ່າໄມ້ ຕາມກົນໄກ ແລະ ລະບຽບຫຼັກການສາກົນທີ່ກ່ຽວຂ້ອງ ເພື່ອຍາດແຍ່ງການຮ່ວມມື ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ;
3. ຄົ້ນຄວ້າ ແລະ ສ້າງນິຕິກໍາ ກົນໄກສົ່ງເສີມການລົງທຶນ ຊື້ ຂາຍ ສິນເຊື່ອກາກບອນປ່າໄມ້ ຂອງລັດ, ຜູ້ປະກອບການ ແລະ ພາກສ່ວນອື່ນ;
4. ຄົ້ນຄວ້າ ແລະ ສ້າງ ກົນໄກການແບ່ງຜົນປະໂຫຍດ ຈາກຄ່າບໍລິການຂອງລະບົບນິເວດປ່າໄມ້ ແລະ ການຂາຍສິນເຊື່ອກາກບອນປ່າໄມ້;
5. ສັງລວມ, ເກັບກໍາຂໍ້ມູນ ແລະ ລາຍງານ ກ່ຽວກັບການປະຕິບັດນະໂຍບາຍດ້ານສັງຄົມ ແລະ ສິ່ງແວດລ້ອມ ຕິດພັນກັບບັນດາໂຄງການ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທໍາລາຍປ່າໄມ້;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຂຶ້ນທະບຽນສິນເຊື່ອກາກບອນປ່າໄມ້;

7. ຊຸກຍູ້, ຕິດຕາມ ກ່ຽວກັບການຈັດຕັ້ງປະຕິບັດ ບັນດາໂຄງການການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ ລວມທັງການແບ່ງປັນຜົນປະໂຫຍດຈາກໂຄງການ;
8. ຕິດຕາມສະພາບ ແລະ ການເຄື່ອນໄຫວ ກ່ຽວກັບວຽກງານການຈ່າຍຄ່າບໍລິການຂອງລະບົບນິເວດປ່າໄມ້ ແລະ ການຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມໃນເວທີສາກົນ ແລະ ພາກພື້ນ;
9. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການທີ່ນຳໃຊ້ງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບ ຂອງຕົນ;
10. ຊຸກຍູ້, ຕິດຕາມ, ປະເມີນຜົນ, ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານ ການຈ່າຍຄ່າບໍລິການຂອງລະບົບນິເວດປ່າໄມ້ ແລະ ຫຼຸດຜ່ອນອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ ໃນແຕ່ລະໄລຍະ;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 16 ໜ້າທີ່ ຂອງກອງສຳຫຼວດປ່າໄມ້ ແລະ ປ້ອງກັນໄຟປ່າ**

ກອງສຳຫຼວດປ່າໄມ້ ແລະ ປ້ອງກັນໄຟປ່າ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສຳຫຼວດຄວາມປົກຫຸ້ມປ່າໄມ້, ສຳຫຼວດປ່າໄມ້ແຫ່ງຊາດ, ສຳຫຼວດປ່າປ້ອງກັນ, ສຳຫຼວດປ່າສະຫງວນ, ສຳຫຼວດປ່າຜະລິດ, ສຳຫຼວດກຳນົດເຂດຟື້ນຟູປ່າປູກໄມ້ ແລະ ເຄື່ອງປ່າຂອງດົງ, ສຳຫຼວດປ່າໄມ້ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ, ສຳຫຼວດເຄື່ອງປ່າຂອງດົງ ແລະ ສຳຫຼວດໄມ້ເພື່ອເປັນພະລັງງານ;
2. ເປັນເຈົ້າການ ດຳເນີນການປະເມີນຄວາມປົກຫຸ້ມປ່າໄມ້ ແລະ ປະເມີນການປ່ຽນແປງຂອງກາກບອນປ່າໄມ້ໃນແຕ່ລະໄລຍະ;
3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງແຜນດຳເນີນງານ ລະບົບຕິດຕາມ, ກວດກາ ປ່າໄມ້ແຫ່ງຊາດ ພ້ອມທັງພັດທະນາລະບົບຕິດຕາມຂໍ້ມູນປ່າໄມ້;
4. ເກັບກຳ ແລະ ສັງລວມ ຂໍ້ມູນຂ່າວສານຊັບພະຍາກອນປ່າໄມ້ ເຂົ້າໃນຖານຂໍ້ມູນ ໃນແຕ່ລະໄລຍະ ເພື່ອການຄຸ້ມຄອງ ແລະ ນຳໃຊ້ ໃນການວາງແຜນ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມຍືນຍົງ ແລະ ເຜີຍແຜ່ ຂໍ້ມູນຊັບພະຍາກອນປ່າໄມ້ ສູ່ສັງຄົມ;
5. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ພື້ນທີ່ຂອງໂຄງການລົງທຶນ ແລະ ບົດລາຍງານຜົນການສຳຫຼວດ ກ່ອນການຂຸດຄົ້ນໄມ້ ແລະ ການສຳຫຼວດປ່າໄມ້ ໃນເນື້ອທີ່ ທີ່ໄດ້ຮັບອະນຸຍາດໃຫ້ຫັນປ່ຽນ;
6. ກຳນົດເຂດ, ສ້າງແຜນ ຈັດສັນປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ການຄຸ້ມຄອງແຫຼ່ງແກ່ນພັນ;
7. ສ້າງແຜນທີ່ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ເພື່ອສະໜອງໃຫ້ການວາງແຜນຄຸ້ມຄອງ 3 ປະເພດປ່າ ຜູ້ປະກອບການ ແລະ ສັງຄົມ;
8. ຄົ້ນຄວ້າ, ສຶກສາ ແລະ ພັດທະນາ ເຕັກນິກວິຊາການ ເພື່ອນຳໃຊ້ເຂົ້າໃນ ການປະເມີນຄວາມປົກຫຸ້ມປ່າໄມ້ ແລະ ການສຳຫຼວດຊັບພະຍາກອນປ່າໄມ້ ຕາມການພັດທະນາຂອງເຕັກໂນໂລຊີ ໃນແຕ່ລະໄລຍະ;
9. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ຕິດຕາມ, ເກັບກຳຂໍ້ມູນ, ວິເຄາະ ແລະ ເຜີຍແຜ່ການຈະເລີນເຕີບໂຕ ຂອງປ່າໄມ້ ແລະ ເຄື່ອງປ່າຂອງດົງ;
10. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງແຜນດຳເນີນງານ ວຽກງານຄຸ້ມຄອງໄຟໄໝ້ລາມປ່າໃຫ້ເປັນລະບົບທັນສະໄໝ ພ້ອມທັງສ້າງແຜນທີ່ ສະແດງເຂດຄວາມສ່ຽງ ແລະ ເຂດທີ່ໄດ້ຮັບຜົນ

ກະທົບຈາກໄຟໄໝ້ລາມປ່າ; ພັດທະນາລະບົບແຈ້ງເຕືອນຈຸດຄວາມຮ້ອນ ເພື່ອເຝົ້າລະວັງ ແລະ ສະກັດກັ້ນໄຟໄໝ້ລາມປ່າ ສາມາດແຈ້ງເຕືອນຜ່ານໂທລະສັບມືຖືຂອງຜູ້ຊົມໃຊ້ໄດ້ຢ່າງທັນເຫດການ;

11. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການ ທີ່ນຳໃຊ້ງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຕົນ;
12. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ພ້ອມທັງສະຫຼຸບ ລາຍງານຜົນການຈັດຕັ້ງປະຕິບັດວຽກງານສຳຫຼວດ ແລະ ປ້ອງກັນໄຟປ່າ ໃນແຕ່ລະໄລຍະ;
13. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 17 ໜ້າທີ່ ຂອງສູນຝຶກອົບຮົມປ່າໄມ້ ແລະ ຢັ້ງຢືນປ່າໄມ້ແຫ່ງຊາດ**

ສູນຝຶກອົບຮົມປ່າໄມ້ ແລະ ຢັ້ງຢືນປ່າໄມ້ແຫ່ງຊາດ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການ ສ້າງ, ປັບປຸງ ນິຕິກຳ ກ່ຽວກັບ ການຂຶ້ນທະບຽນປ່າປູກ ແລະ ໃບຢັ້ງຢືນໄມ້ປູກ ແລະ ສ້າງມາດຕະຖານການຢັ້ງຢືນປ່າໄມ້ແຫ່ງຊາດ ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ;
2. ເປັນເຈົ້າການ ສ້າງຄູ່ມືຝຶກອົບຮົມ ກ່ຽວກັບ ການກ້າເບ້ຍໄມ້, ປູກໄມ້, ຟື້ນຟູປ່າ ແລະ ຫັດຖະກຳປໍສາ, ຫັດຖະກຳໄມ້ປ່ອງ ແບບມີສ່ວນຮ່ວມ ແລະ ວຽກງານທີ່ຕິດພັນກັບການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້; ພ້ອມໃຫ້ ບໍລິການ ຈັດຝຶກອົບຮົມໄລຍະສັ້ນ ກ່ຽວກັບ ເຕັກນິກວິຊາການປ່າໄມ້ ເຊັ່ນ ການຄຸ້ມຄອງປ່າໄມ້ ຕາມລະບົບ 3 ປະເພດປ່າ, ການຄຸ້ມຄອງອະນຸລັກຊີວະນາໆພັນ, ການຄຸ້ມຄອງສັດປ່າ, ການຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ອື່ນໆ;
3. ຜະລິດເບ້ຍໄມ້ ເພື່ອສະໜອງແຜນງານຟື້ນຟູປ່າ ແລະ ຈຳໜ່າຍເບ້ຍໄມ້ ໃຫ້ແກ່ສັງຄົມ;
4. ຄົ້ນຄວ້າ ແລະ ສຶກສາ ທ່າແຮງຄວາມເປັນໄປໄດ້ ໃນການພັດທະນາເຂດຟື້ນຟູປ່າສາທິດ ເປັນແຫຼ່ງທ່ອງທ່ຽວທຳມະຊາດ ໂດຍການມີສ່ວນຮ່ວມ ຂອງຜູ້ປະກອບການ ແລະ ຊຸມຊົນ ໃນການຄຸ້ມຄອງ, ປົກປັກຮັກສາ, ປູກ ແລະ ຟື້ນຟູປ່າໄມ້ ຕິດພັນກັບການປຸງແຕ່ງຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ໃນເຂດຄວາມຮັບຜິດຊອບຂອງຕົນ;
5. ສ້າງສື່ສິ່ງພິມ, ແຜ່ນພັບ, ໂປດສະເຕີ ແລະ ຈັດຕັ້ງການໂຄສະນາເຜີຍແຜ່ ຜົນສຳເລັດຂອງການຈັດຕັ້ງວຽກງານຟື້ນຟູປ່າ ແລະ ການຈະເລີນເຕີບໂຕຂອງຕົ້ນໄມ້ ໃນເຂດຟື້ນຟູປ່າສາທິດ;
6. ໂຄສະນາ ເຜີຍແຜ່ ມາດຖານການຢັ້ງຢືນປ່າໄມ້ແຫ່ງຊາດ ແລະ ການຂຶ້ນທະບຽນປ່າປູກ ແລະ ໃບຢັ້ງຢືນໄມ້ປູກ;
7. ສ້າງແຜນດຳເນີນງານຈັດຕັ້ງປະຕິບັດ ການຢັ້ງຢືນ ປ່າໄມ້ທຳມະຊາດ, ປ່າປູກ ແລະ ເຄື່ອງປ່າຂອງດົງ ໃຫ້ສອດຄ່ອງ ຕາມມາດຕະຖານ ການຢັ້ງຢືນປ່າໄມ້ແຫ່ງຊາດ ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ;
8. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຂຶ້ນທະບຽນປ່າປູກ ແລະ ໃບຢັ້ງຢືນໄມ້ປູກ ແລະ ການຢັ້ງຢືນປ່າໄມ້ແຫ່ງຊາດ ໃນຂອບເຂດທົ່ວປະເທດ;
9. ຊຸກຍູ້, ຕິດຕາມ ແລະ ກວດກາການ ການຈັດຕັ້ງປະຕິບັດ ວຽກງານການ ຂຶ້ນທະບຽນປ່າປູກ ແລະ ໃບຢັ້ງຢືນໄມ້ປູກ ແລະ ການຢັ້ງຢືນປ່າໄມ້ແຫ່ງຊາດ;
10. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການທີ່ນຳໃຊ້ງົບປະມານ ຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຕົນ;
11. ຊຸກຍູ້, ຕິດຕາມ, ປະເມີນຜົນ, ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຝຶກອົບຮົມ ແລະ ຢັ້ງຢືນປ່າໄມ້ແຫ່ງຊາດ ໃນແຕ່ລະໄລຍະ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 18 ຫຼັກການ

ກົມປ່າໄມ້ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມ ຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ແລະ ພາລະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນຳເອົາແນວທາງນະໂຍບາຍ ຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 19 ແບບແຜນວິທີເຮັດວຽກ

ກົມປ່າໄມ້ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນ ກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍ ຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງ ຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນຳແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄຳເຫັນ ໃນການຈັດຕັ້ງປະຕິບັດແຜນການ ເປັນແຕ່ລະໄລຍະ;
4. ຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງຕໍ່ ຄະນະປະຈຳພັກ, ຄະນະພັກ, ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງຕົນ, ຮອງຫົວໜ້າກົມ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍ ຂອງຫົວໜ້າກົມ;
5. ຫົວໜ້າກົມ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມ ທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານ ທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າກົມ ຊາບ ພາຍຫຼັງກັບມາປະຈຳການ;
6. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 20 ງົບປະມານ ແລະ ຕາປະທັບ**

ກົມປ່າໄມ້ ມີງົບປະມານ, ຕາປະທັບ ແລະ ເຄື່ອງແບບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 21 ການຈັດຕັ້ງປະຕິບັດ**

ກົມປ່າໄມ້, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຂະແໜງສາຍຕັ້ງຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປ່າໄມ້ ສະບັບເລກທີ 3202/ກປ, ລົງວັນທີ 07 ກໍລະກົດ 2023.

**ລັດຖະມົນຕີ**

**ປອ. ລິນຄຳ ດວງສະຫວັນ**